ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້
ກົມປູກຝັງ

ເລກທີ 1393 /ກປຝ

ນະຄອນຫລວງວຽງຈັນ, ວັນທີ 07/07/2017

# ບົດແນະນຳ
# ກ່ຽວກັບ ການຄຸ້ມຄອງ ການດຳເນີນກິດຈະການ ດ້ານການປູກຝັງ

- **ອີງຕາມ** ກົດໝາຍ ວ່າດ້ວຍ ກະສິກຳ, ເລກທີ 01/98 ສພຊ, ລົງວັນທີ 01/10/1998 ຢູ່ໃນ ພາກທີ VI ວ່າດ້ວຍ ການຄຸ້ມຄອງ ແລະ ກວດກາ ກິດຈະການກະສິກຳ, ມາດຕາ 68 ສິດ ແລະ ໜ້າທີ່ ຂອງກະຊວງ ກະສິກຳ ແລະ ປ່າໄມ້;
- **ອີງຕາມ** ກົດໝາຍ ວ່າດ້ວຍ ການສົ່ງເສີມການລົງທຶນ (ສະບັບປັບປຸງ) ສະບັບເລກທີ 14/ສພຊ, ລົງວັນທີ 17/11/2016;
- **ອີງຕາມ** ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້, ສະບັບ ເລກທີ 1889/ກປ, ລົງວັນທີ 9/08/2012 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມປູກຝັງ.

# ພາກທີ I

# ວ່າດ້ວຍ ຫຼັກການລວມ

**ມາດຕາ 1 ຈຸດປະສົງ**

ເພື່ອກໍານົດຫຼັກການ, ຂັ້ນຕອນວິທີການຈັດຕັ້ງປະຕິບັດ ການຄຸ້ມຄອງການດໍາເນີນກິດຈະການດ້ານການປູກຝັງ ເປັນຕົ້ນ: ການສ້າງບົດວິພາກເສດຖະກິດ-ເຕັກນິກ ການລົງທຶນປູກພືດເປັນສິນຄ້າ ແລະ ການຂໍໃບຢັ້ງຢືນເຕັກນິກວິຊາການ ດ້ານການປູກພືດເປັນສິນຄ້າ ເພື່ອເປັນບ່ອນອີງໃຫ້ແກ່ຂະແໜງການປູກຝັງ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນວຽກງານການລົງທຶນ ດ້ານການປູກຝັງ ໃຫ້ຖືກຕ້ອງຕາມເຕັກນິກວິຊາການ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃຫ້ມີການຂະຫຍາຍ ຕົວຢ່າງຕໍ່ເນື່ອງ ຕາມທິດສະອາດ ສີຂຽວ ແລະ ຍືນຍົງ.

**ມາດຕາ 2 ລະດັບຄາດໝາຍ**

ເພື່ອເປັນເຄື່ອງມືໃນການຄຸ້ມຄອງ, ການຊຸກຍູ້, ຕິດຕາມ, ກວດກາ ຂອງບັນດາຫົວໜ່ວຍທຸລະກິດ ການດໍາເນີນກິດຈະການດ້ານການປູກຝັງ ໃຫ້ຖືກຕ້ອງຕາມເຕັກນິກວິຊາການ ແນໃສ່ຫຼຸດຜ່ອນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ.

**ມາດຕາ 3 ຂອບເຂດການນໍາໃຊ້**

ບົດແນະນໍາສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ເພື່ອເປັນບ່ອນອີງໃນການດໍາເນີນກິດຈະການ ດ້ານການປູກຝັງ.

# ພາກທີ II
# ການສ້າງບົດວິພາກເສດຖະກິດເຕັກນິກການລົງທຶນ ປູກພືດເປັນສິນຄ້າ

## ມາດຕາ 4 ເງື່ອນໄຂ ແລະ ຂັ້ນຕອນການສ້າງບົດວິພາກເສດຖະກິດເຕັກນິກການປູກພືດເປັນສິນຄ້າ

1. **ຜູ້ລົງທຶນປູກພືດເປັນສິນຄ້າ ກໍລະນີຮູບແບບເຊົ່າ ຫຼື ສໍາປະທານເນື້ອທີ່**
   - ຜູ້ທີ່ຈະລົງທຶນປູກພືດເປັນສິນຄ້າ ຕ້ອງປະກອບເອກະສານ ຕາມທີ່ ຂະແໜງແຜນການ ແລະ ການລົງທຶນ ໄດ້ກໍານົດໄວ້ໃຫ້ຄົບຖ້ວນ ໂດຍສະເພາະ ຕ້ອງເຮັດບົດບັນທຶກຄວາມເຂົ້າໃຈ (MOU) ເພື່ອສຶກສາສໍາຫຼວດພື້ນທີ່;
   - ມີເນື້ອທີ່ດິນ ທີ່ໄດ້ຮັບການຢັ້ງຢືນຮັບຮອງ ຫຼື ອະນຸມັດສໍາປະທານ ຈາກຂະແໜງການທີ່ກ່ຽວຂ້ອງ;
   - ມີໃບຢັ້ງຢືນ ການປະເມີນຜົນກະທົບສິ່ງແວດລ້ອມ ແລະ ເສດຖະກິດ-ສັງຄົມ;
   - ມີໃບທະບຽນວິສາຫະກິດ ອອກໃຫ້ໂດຍ ຂະແໜງການອຸດສາຫະກໍາ ແລະ ການຄ້າ;
   - ມີໃບທະບຽນອາກອນ ອອກໃຫ້ໂດຍຂະແໜງການສ່ວຍສາອາກອນ;

2. **ຜູ້ລົງທຶນປູກພືດເປັນສິນຄ້າຮູບແບບສົ່ງເສີມປະຊາຊົນ (ຮູບແບບ 2+3)**
   - ມີໃບທະບຽນວິສາຫະກິດ ອອກໃຫ້ໂດຍ ຂະແໜງການອຸດສາຫະກໍາ ແລະ ການຄ້າ;
   - ມີໃບທະບຽນອາກອນ ອອກໃຫ້ໂດຍ ຂະແໜງການສ່ວຍສາອາກອນ;
   - ມີໜັງສືສັນຍາສອງຝ່າຍ ລະຫວ່າງ ບໍລິສັດ ກັບປະຊາຊົນຜູ້ຜະລິດ (ສັນຍາການຜະລິດ ແລະ ສັນຍາເກັບຊື້) ໂດຍຢັ້ງຢືນຈາກອໍານາດການປົກຄອງບ້ານ ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ.

**ມາດຕາ 5 ເນື້ອໃນບົດວິພາກເສດຖະກິດ-ເຕັກນິກ ການປູກພືດເປັນສິນຄ້າ**

ໂຄງຮ່າງການຂຽນ ບົດວິພາກເສດຖະກິດ-ເຕັກນິກ ການປູກພືດເປັນສິນຄ້າລາຍລະອຽດມີດັ່ງນີ້:

**I. ສະພາບລວມຂອງໂຄງການ**

**1. ແຜນການລວມ**

1.1 ແຜນງານ, ຊື່ໂຄງການ, ຊື່ ແລະ ນາມສະກຸນ, ເບີໂທເຈົ້າຂອງໂຄງການ, ທີ່ຕັ້ງສຳນັກງານຫ້ອງການ, ທີ່ຕັ້ງໂຄງການ, ຂອບເຂດພື້ນທີ່, ມູນຄ່າການລົງທຶນ, ກຳນົດໄລຍະເວລາຂອງໂຄງການ ແລະ ຕ້ອງອະທິບາຍລະອຽດ ກ່ຽວກັບ ຜູ້ທີ່ໄດ້ຮັບຜົນປະໂຫຍດ ທາງກົງ ຄື: ພາກລັດຈະໄດ້ຜົນປະໂຫຍດຫຍັງ, ປະຊາຊົນຜູ້ທີ່ເຂົ້າຮ່ວມໂຄງການ, ຜູ້ທີ່ດຳລົງຊີວິດໃນຂອບເຂດໂຄງການ ຫລື ໃກ້ກັບເຂດພັດທະນາໂຄງການຈະໄດ້ຮັບຜົນປະໂຫຍດຈາກໂຄງ ການແນວໃດ ແລະ ຜູ້ລົງທຶນຈະໄດ້ຮັບຜົນປະໂຫຍດ ຫຍັງແດ່. ພ້ອມດຽວກັນນັ້ນ, ຕ້ອງໄດ້ລະບຸຜົນປະໂຫຍດທາງອ້ອມຈາກໂຄງການມີແນວໃດ.

1.2 ຈຸດພິເສດ ແລະ ທ່າແຮງ ໂດຍເນັ້ນໃຫ້ເຫັນ ແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການ ນຳໃຊ້ພື້ນທີ່ ແລະ ປົກປັກຮັກສາສິ່ງແວດລ້ອມ ໃນຂອບເຂດພື້ນທີ່ຂອງໂຄງການ.

**2. ຈຸດປະສົງ ແລະ ລະດັບຄາດໝາຍ ຂອງໂຄງການ**

2.1 ຈຸດປະສົງ: ໂດຍຊີ້ໃຫ້ເຫັນເປົ້າໝາຍ ແລະ ຄວາມຕ້ອງການທີ່ຈະດຳເນີນກິດຈະການ ຂອງໂຄງການ.

2.2 ລະດັບຄາດໝາຍ: ອະທິບາຍຄວາມອາດສາມາດສູງສຸດ ທີ່ຈະຕ້ອງບັນລຸເປົ້າໝາຍ.

### 3. ບັນດາກົດໝາຍ ແລະ ລະບຽບການ

3.1 ແນວທາງນະໂຍບາຍ ຂອງລັດຖະບານທີ່ກ່ຽວຂ້ອງ ກັບການລົງທຶນຜະລິດພືດນັ້ນໆ;

3.2 ບັນດາກົດໝາຍ ແລະ ນິຕິກຳຕ່າງໆ ທີ່ເປັນບ່ອນອີງ ໃນການຈັດຕັ້ງປະຕິບັດ.

## II. ການພັດທະນາໂຄງການ

### 1. ຄວາມເປັນມາ ແລະ ເຫດຜົນຂອງການລົງທຶນ

1.1 ຄວາມເປັນມາ ແລະ ເຫດຜົນຂອງການລົງທຶນ:

ປະຫວັດຄວາມເປັນມາຂອງບໍລິສັດ ຜ່ານມາເຄີຍດຳເນີນກິດຈະການຫຍັງແດ່, ໄດ້ຮັບໃບທະບຽນວິສາຫະກິດສະບັບເລກທີ, ລົງວັນທີໃດ, ເປັນຫຍັງຈຶ່ງຕ້ອງການ ດຳເນີນກິດຈະການດັ່ງກ່າວ, ມີທ່າແຮງແນວໃດແດ່ ແລະ ທີ່ສຳຄັນພັກ-ລັດມີນະໂຍບາຍແນວໃດ ໃນການພັດທະນາໂຄງການ.

1.2 ສະພາບພື້ນທີ່ໃນເຂດພັດທະນາໂຄງການ

- ຂໍ້ມູນທາງດ້ານກະສິກຳ ເຊັ່ນ: ສະພາບພື້ນທີ່, ພູມສັນຖານ, ຄວາມອຸດົມສົມບູນຂອງດິນ(ຄ່າ phຂອງດິນ), ຄວາມສູງຈາກລະດັບໜ້ານ້ຳທະເລ, ອຸນຫະພູມ, ຄວາມຊຸ່ມ, ແສງແດດ, ປະລິມານນ້ຳຝົນ, ແຫຼ່ງນ້ຳ, ແລະ ອື່ນໆ);
- ຂໍ້ມູນທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ.

1.3 ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍອື່ນໆ ໃນການດຳເນີນໂຄງການ.

### 2. ສັງເກດຕີລາຄາລວມຂອງໂຄງການ

2.1 ວິທີການຈັດຕັ້ງປະຕິບັດ

ກຳນົດວິທີການຈັດຕັ້ງປະຕິບັດໃຫ້ລະອຽດ ວ່າຈະຈັດຕັ້ງປະຕິບັດແນວໃດ ໃນການພັດທະນາໂຄງການ ເພື່ອໃຫ້ໄດ້ຮັບຜົນປະໂຫຍດສູງ

ສຸດ ແລະ ສາມາດຈັດຕັ້ງປະຕິບັດໄດ້ຕາມແຜນທີ່ວາງໄວ ແລະ ທີ່ສໍາຄັນ ໃນກໍລະນີ ເປັນໂຄງການສົ່ງເສີມ ຄວນມີການສ້າງຕັ້ງກຸ່ມການຜະລິດ ໂດຍມີສັນຍາຜູກພັນສອງຝ່າຍ ເປັນຂໍ້ຜູກມັດ.

2.2 ຮູບການລົງທຶນ

- ກໍານົດທຶນທັງໝົດ, ທຶນຈົດທະບຽນ ແລະ ໃນນັ້ນຕ້ອງແຍກໃຫ້ເຫັນທຶນຄົງທີ່ ແລະ ທຶນໝູນວຽນ;
- ລະບຸແຫຼ່ງທີ່ມາຂອງທຶນທັງໝົດ ເປັນຕົ້ນແຫຼ່ງທຶນຂອງຕົນເອງ, ທຶນຈາກການລະດົມຫຸ້ນ, ຈາກການກູ້ຢືມທະນາຄານ ແລະ ອື່ນໆ.

2.3 ການຄິດໄລ່ງົບປະມານຄ່າໃຊ້ຈ່າຍ ຕົ້ນທຶນໝູນວຽນ

- ເງິນເດືອນ, ເບ້ຍລ້ຽງ, ເງິນອຸດໜູນ ແລະ ຄ່າແຮງງານອື່ນໆ ຕາມສັນຍາ (ໃຫ້ຄິດໄລ່ລະອຽດ);
- ການຄິດໄລ່ ພັນທະເສຍພາສີອາກອນຕ່າງໆ (ໃຫ້ຄິດໄລ່ລະອຽດ);
- ຄ່າບຸກເບີກພື້ນທີ່ ແລະ ກຽມດິນ (ໃຫ້ຄິດໄລ່ລະອຽດ);
- ຄ່າປັດໃຈການຜະລິດ (ແນວພັນ, ຝຸ່ນ ແລະ ຢາປາບສັດຕູພືດ), ຖ້າມີການນໍາເຂົ້າ ໃຫ້ປະຕິບັດຕາມລະບຽບກົດໝາຍ ຂອງ ສປປ ລາວ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

2.4 ຄ່າໃຊ້ຈ່າຍຕົ້ນທຶນຄົງທີ່

- ປຸກສ້າງສໍານັກງານ, ຫ້ອງການ, ເຮືອນພັກກໍາມະກອນ, ເຄື່ອງກົນຈັກ ແລະ ໂຮງງານປຸງແຕ່ງຕ່າງໆ (ໃຫ້ຄິດໄລ່ລະອຽດ);
- ພາຫານະຮັບໃຊ້ ແລະ ເຄື່ອງໃຊ້ທີ່ຈໍາເປັນໃນຫ້ອງການ (ໃຫ້ຄິດໄລ່ລະອຽດຈໍານວນພາຫານະ, ເຄື່ອງໃຊ້ໃນຫ້ອງການ).

2.5 ຮູບແບບການຄຸ້ມຄອງໂຄງການ

- ໂຄງຮ່າງການຈັດຕັ້ງຂອງໂຄງການ (ອະທິບາຍລະອຽດ ໜ້າທີ່ຮັບຜິດຊອບຂອງແຕ່ລະໜ່ວຍງານ);
- ກົດລະບຽບຂອງໂຄງການ (ໃຫ້ຂຽນລະອຽດ);

- ມີນັກວິຊາການທີ່ຮັບຜິດຊອບໃນແຕ່ລະດ້ານ (ຕ້ອງລະບຸປະຫວັດຂອງນັກວິຊາການ, ໜັງສືສັນຍາ ລະຫວ່າງ ວິຊາການ ກັບ ບໍລິສັດ ແລະ ຖ້າມີໃບຢັ້ງຢືນຂອງວິຊາການ ແມ່ນໃຫ້ຄັດຕິດເປັນເອກະສານຊ້ອນທ້າຍ).

2.6 ການນໍາໃຊ້ແຮງງານຂອງໂຄງການ

ຕ້ອງລະບຸ ຫຼື ຄາດຄະເນຈໍານວນແຮງງານ, ທີ່ມາຂອງແຮງງານ ແລະ ຄວາມຕ້ອງການແຮງງານ ໃນການພັດທະນາໂຄງການ ໂດຍອີງໃສ່ ກົດໝາຍ ວ່າດ້ວຍ ແຮງານ ຂອງ ສປປ ລາວ.

## 3. ການພັດທະນາດ້ານເຕັກນິກວິຊາການ

### 3.1 ດ້ານການປູກພືດ

ຈຸດພິເສດ ແລະ ຄວາມເປັນມາຂອງພືດ ທີ່ຈະດໍາເນີນກິດຈະການ, ຊື່ສາມັນ, ຊື່ວິທະຍາສາດຕະກຸນ, ຄຸນປະໂຫຍດ ແລະ ຄຸນລັກສະນະທາງສາລິລະວິທະຍາຂອງພືດ, ຜົນຜະລິດຕໍ່ເຮັກຕາ ແລະ ອື່ນໆ.

1. ການເລືອກພື້ນທີ່: ສະພາບພື້ນທີ່, ຄວາມອຸດົມສົມບູນຂອງດິນ, ລະດັບຄວາມເປັນກົດເປັນດ່າງຂອງດິນ (pH) ແລະ ສະພາບດິນຟ້າອາກາດ ທ່າແຮງທາງດ້ານຊັບພະຍາກອນທໍາມະຊາດ;
2. ຊະນິດແນວພັນທີ່ນໍາມາປູກ: ຊື່ ແລະ ຊະນິດຂອງແນວພັນ, ຄວາມອາດສາມາດຂອງຜົນຜະລິດ ແລະ ແຫຼ່ງທີ່ມາຂອງແນວພັນ;
3. ລະດູການປູກ: ຊວງໄລຍະເວລາທີ່ເໝາະສົມ ວັນທີ, ເດືອນ, ປີ ຂອງການປູກພືດເປົ້າໝາຍການລົງທຶນ;
4. ການກຽມດິນ: ຮູບແບບວິທີການກຽມດິນ;
5. ການປູກ: ເຕັກນິກວິທີການປູກ;
6. ການບົວລະບັດຮັກສາ: ການໃຫ້ນໍ້າ, ການໃສ່ຝຸ່ນ, ການເສຍຫຍ້າ, ການປ້ອງກໍາຈັດສັດຕູພືດ ແລະ ອື່ນໆ;

7. ວິທະຍາການຫຼັງເກັບກ່ຽວ: ຂັ້ນຕອນ, ວິທີການເກັບກ່ຽວ, ປຸງແຕ່ງ ແລະ ເກັບຮັກສາ:
   - ການເກັບກ່ຽວ: ເກັບກ່ຽວດ້ວຍແຮງງານຄົນ ຫຼື ກົນຈັກ;
   - ການປຸງແຕ່ງ: ປຸງແຕ່ງໃນລະດັບໃດ (ສໍາເລັດຮູບ ຫຼື ເຄິ່ງສໍາເລັດຮູບ) ອະທິບາຍຂັ້ນຕອນຂອງການປຸງແຕ່ງ;
   - ການເກັບຮັກສາ: ມີສາງເກັບມ້ຽນ-ສາງເຢັນ.
8. ການຫຸ້ມຫໍ່: ວິທີການຫຸ້ມຫໍ່ຜະລິດຕະພັນພືດ ພາຍຫຼັງເກັບກ່ຽວ ຫຼື ການປຸງແຕ່ງ;
9. ການຂົນສົ່ງ: ນັບແຕ່ພື້ນທີ່ການຜະລິດ ຈົນເຖິງຕະຫຼາດຈໍາໜ່າຍ;

**3.2 ການຕະຫຼາດ**: ການເຂົ້າເຖິງຕະຫຼາດຂອງສິນຄ້າ ແລະ ເປົ້າໝາຍຂອງຕະຫຼາດຈໍາໜ່າຍພາຍໃນ ຫຼື ສົ່ງອອກຕ່າງປະເທດ (ຕ້ອງລະບຸປະເທດສົ່ງອອກ) ແລະ ຕ້ອງປະຕິບັດຕາມລະບຽບການ ຂອງປະເທດປາຍທາງ.

## III. ຕີລາຄາຜົນຂອງການດໍາເນີນໂຄງການ

### 1. ແຜນການດໍາເນີນໂຄງການ

1.1 ສ້າງຕາຕະລາງ ຄາດຄະເນ ການໃຊ້ຈ່າຍໃນແຕ່ລະປີໃຫ້ລະອຽດ;

1.2 ສ້າງຕາຕະລາງ ແຜນການປູກ, ການຜະລິດ ໃນແຕ່ລະປີໃຫ້ລະອຽດ;

1.3 ແຜນການການປົກປັກຮັກສາສິ່ງແວດລ້ອມ ແລະ ສັງຄົມ ໃນພື້ນທີ່ໂຄງການ;

1.4 ສ້າງຕາຕະລາງ ຄາດຄະເນຄວາມຕ້ອງການ ຕົ້ນທຶນການຜະລິດ ໃນ 1 ເຮັກຕາ ໂດຍຍົກໃຫ້ເຫັນລາຍການນໍາໃຊ້ ປັດໄຈການຜະລິດ, ຈໍານວນ, ງົບປະມານ, ລາຍຮັບ, ລາຍຈ່າຍ ແລະ ປະສິດທິຜົນຂອງການລົງທຶນລະອຽດ;

1.5 ສ້າງຕາຕະລາງ ຄາດຄະເນ ຕົ້ນທຶນ, ລາຍຮັບ ແລະ ກຳໄລ ແຕ່ລະປີ ຕາມອາຍຸໂຄງການ ໂດຍຍົກໃຫ້ເຫັນເຖິງເນື້ອທີ່, ມູນຄ່າການລົງທຶນ, ສະມັດຕະພາບຜົນຜະລິດ, ຜົນຜະລິດລວມ, ລາຄາເກັບຊື້, ລາຍຮັບ ແລະ ກຳໄລ ໃນແຕ່ລະປີໃຫ້ລະອຽດ;

1.6 ຜົນຕອບແທນລະດັບໂຄງການໃນແຕ່ລະປີ ຕາມອາຍຸໂຄງການ.

## 2. ລະບົບການລາຍງານ, ການຊຸກຍູ້ຕິດຕາມ ຂອງພາກລັດ ແລະ ການປະກອບສ່ວນສັງຄົມ

2.1 ລະບົບການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການ

ລາຍງານປົກກະຕິ ທຸກໆ 3 ເດືອນ, 6 ເດືອນ ແລະ ປະຈຳປີ ໃຫ້ແກ່ຂະແໜງການປູກຝັງແຂວງ, ນະຄອນຫຼວງ ທີ່ໂຄງການຈັດຕັ້ງປະຕິບັດ ແລະ ລາຍງານປະຈຳປີ ຫາກົມປູກຝັງ, ກະຊວງ ກະສິກຳ ແລະ ປ່າໄມ້.

2.2 ລະບົບການຊຸກຍູ້ ຕິດຕາມ

ແຜນການລົງຊຸກຍູ້, ຕິດຕາມຂອງພະນັກງານພາກລັດ ທີ່ກ່ຽວຂ້ອງຂັ້ນທ້ອງຖິ່ນ, ຂັ້ນສູນກາງ ໃຫ້ລະອຽດ ໂດຍກຳນົດແຜນຄົນ, ແຜນງານ ແລະ ແຜນງົບປະມານ.

ໃນກໍລະນີ ບໍລິສັດປະສົບບັນຫາໃດໜຶ່ງ ທີ່ມີຄວາມຮຽກຮ້ອງຕ້ອງການ ທາງດ້ານພະນັກງານວິຊາການຈາກພາກລັດ ໃຫ້ເຂົ້າມາຊ່ວຍບໍລິສັດຈະຕ້ອງຮັບຜິດຊອບດ້ານງົບປະມານ ໃນການລົງຕິດຕາມຊ່ວຍເຫຼືອທັງໝົດ.

2.3 ການຊ່ວຍເຫຼືອສັງຄົມ

ການປະກອບສ່ວນໃນການພັດທະນາ ກໍ່ສ້າງພື້ນຖານໂຄງລ່າງ (ຖະໜົນ, ໂຮງຮຽນ, ໂຮງໝໍ, ເຮືອນຊານ, ເຄື່ອງຮັບໃຊ້ອື່ນໆ) ໃນຂອບເຂດໂຄງການ ໃຫ້ສ້າງຕາຕະລາງ ແຜນການປະກອບສ່ວນລະອຽດໃນແຕ່ລະປີ.

2.4 ແຜນພັດທະນາ ແລະ ປົກປັກຮັກສາສິ່ງແວດລ້ອມ

ໂຄງການມີແຜນການພັດທະນາ ແລະ ຟື້ນຟູພື້ນທີ່ໂຄງການແນວໃດ ຫຼັງຈາກສິ້ນສຸດໂຄງການ ຕ້ອງຂຽນແຜນການຈັດຕັ້ງປະຕິບັດການຟື້ນຟູ ພື້ນທີ່ໃຫ້ລະອຽດ.

## 3. ສະຫຼຸບໂດຍຫຍໍ້ຄາດຄະເນຜົນໄດ້ຮັບຈາກໂຄງການ:

- ມູນຄ່າຂອງການລົງທຶນທັງໝົດຂອງໂຄງການ;
- ເນື້ອທີ່ປູກທັງໝົດ;
- ໄລຍະດຳເນີນໂຄງການ;
- ຕົ້ນທຶນການຜະລິດສະເລ່ຍ ຕໍ່ 1 ເຮັກຕາ;
- ຄາດຄະເນ ລາຍຮັບທັງໝົດຂອງການລົງທຶນ ຕາມອາຍຸໂຄງການ;
- ຜົນຕອບແທນໂຄງການ ຕາມອາຍຸໂຄງການລົງທຶນ (Benifit Cost.. Ratio (B/C Ratio);
- ໄລຍະເວລາຄືນທຶນ (Payback Period = BP);
- ມູນຄ່າປະຈຸບັນສຸດທິ (Net Present Value = NPV);
- ວິເຄາະປະສິດທິຜົນຂອງໂຄງການ (Internal Rate of Return = IRR);
- ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ສະເໜີ.

➢ **ບົດວິພາກເສດຖະກິດ-ເຕັກນິກ ຕ້ອງປະກອບມີເອກະສານຊ້ອນທ້າຍດັ່ງລຸ່ມນີ້:**

- ແຜນທີ່ສະແດງຂອບເຂດໂຄງການ;
- ໃບອະນຸຍາດສຳປະທານເນື້ອທີ່ດິນ ຈາກຂະແໜງການທີ່ກ່ຽວຂ້ອງ ຫຼື ຈາກລັດຖະບານ (ໂຄງການສຳປະທານພື້ນທີ່);
- ໃບທະບຽນວິສາຫະກິດ;
- ໃບທະບຽນອາກອນ;

- ໃບອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງ (ສໍາລັບການລົງທຶນມີການສ້າງຕັ້ງໂຮງງານປຸງແຕ່ງຜະລິດຕະພັນກະສິກໍາ)
- ໃບປະເມີນຜົນກະທົບສິ່ງແວດລ້ອມ (ໂຄງການສໍາປະທານພື້ນທີ່ ແລະ ມີການສ້າງຕັ້ງໂຮງງານ)
- ມີໜັງສືສັນຍາສອງຝ່າຍ ລະຫວ່າງ ບໍລິສັດ ກັບ ປະຊາຊົນຜູ້ຜະລິດ (ສັນຍາການຜະລິດ ແລະ ສັນຍາເກັບຊື້) ໂດຍຢັ້ງຢືນຈາກອໍານາດການປົກຄອງບ້ານ ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ (ສໍາລັບການລົງທຶນສົ່ງເສີມປະຊາຊົນຮູບແບບ 2+3).
- ກົດລະບຽບ ຂອງບໍລິສັດ.

## ພາກທີ III
## ການຢັ້ງຢືນເຕັກນິກວິຊາການ ດ້ານການປູກພືດເປັນສິນຄ້າ

### ມາດຕາ 6 ເງື່ອນໄຂການອອກໃບຢັ້ງຢືນເຕັກນິກວິຊາການດ້ານການປູກພືດເປັນສິນຄ້າ

1. ຜູ້ປະກອບການ ຫຼື ຫົວໜ່ວຍທຸລະກິດ ຕ້ອງປະກອບບົດວິພາກເສດຖະກິດ-ເຕັກນິກການປູກພືດເປັນສິນຄ້າ ໂດຍອີງຕາມ ພາກທີ II, ມາດຕາ 5 ຂອງບົດແນະນໍາສະບັບນີ້ ເພື່ອເປັນບ່ອນອີງໃນການຂຽນບົດ ແລະ ສະເໜີຫາຂະແໜງການປູກຝັງ ເພື່ອຄົ້ນຄວ້າ ແລະ ລົງກວດກາພື້ນທີ່ຕົວຈິງ;
2. ຕ້ອງຜ່ານການລົງກວດກາພື້ນທີ່ຕົວຈິງ ກ່ອນເປີດກອງປະຊຸມວິຊາການ ໂດຍຂະແໜງການປູກຝັງ ເປັນເຈົ້າການ ໃນການປະສານສົມທົບ ກັບ ຂະແໜງການທີ່ກ່ຽວຂ້ອງ ຂັ້ນທ້ອງຖິ່ນ;
3. ຈັດກອງປະຊຸມ ຜ່ານບົດວິພາກເສດຖະກິດ-ເຕັກນິກ ການປູກພືດເປັນສິນຄ້າ ໂດຍມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ ເພື່ອຄົ້ນຄວ້າປຶກສາຫາລື ແລະ ອອກໃບຢັ້ງຢືນເຕັກນິກວິຊາການ;

### ມາດຕາ 7 ການພິຈາລະນາອອກໃບຢັ້ງຢືນເຕັກນິກວິຊາການ

ການຄົ້ນຄວ້າ ແລະ ພິຈາລະນາ ອອກໃບຢັ້ງຢືນເຕັກນິກວິຊາການດ້ານການປູກພືດເປັນສິນຄ້າ ໃຫ້ແກ່ຜູ້ປະກອບການ ຫຼື ຫົວໜ່ວຍທຸລະກິດຈະພິຈາລະນາອອກ ພາຍໃນ ສິບວັນ ລັດຖະການ ພາຍຫຼັງສຳເລັດກອງປະຊຸມວິຊາການ ເຊິ່ງສາມາດອອກໃຫ້ໄດ້ 2 ຂັ້ນ ຄື: ຂັ້ນສູນກາງ (ກົມປູກຝັງ) ແລະ ຂັ້ນແຂວງ, ນະຄອນຫຼວງ (ຂະແໜງປູກຝັງ) ລາຍລະອຽດດັ່ງນີ້:

1. ກົມປູກຝັງ ອອກໃບຢັ້ງຢືນເຕັກນິກວິຊາການ ດ້ານການປູກພືດເປັນສິນຄ້າ ຕາມການສະເໜີຂອງຜູ້ປະກອບການ, ໂດຍປະຕິບັດຕາມໃບອະນຸຍາດລົງທຶນ ແລະ ໃບທະບຽນວິສາຫະກິດ ຂອງຜູ້ປະກອບການທີ່ໄດ້ຮັບຕ້ອງອອກໃຫ້ໂດຍຂັ້ນສູນກາງ.
2. ຂະແໜງປູກຝັງແຂວງ, ນະຄອນຫຼວງ ອອກໃບຢັ້ງຢືນເຕັກນິກວິຊາການດ້ານການປູກພືດເປັນສິນຄ້າ ຕາມການສະເໜີຂອງຜູ້ປະກອບການ, ໂດຍປະຕິບັດຕາມໃບອະນຸຍາດລົງທຶນ ແລະ ໃບທະບຽນວິສາຫະກິດ ຂອງຜູ້ປະກອບການໄດ້ຮັບ ຕ້ອງອອກໃຫ້ໂດຍ ຂັ້ນແຂວງ, ນະຄອນຫຼວງ.

### ມາດຕາ 8 ໃບຢັ້ງຢືນເຕັກນິກວິຊາການ

ໃບຢັ້ງຢືນເຕັກນິກວິຊາການ ດ້ານປູກພືດເປັນສິນຄ້າ ອອກໃຫ້ໂດຍຂະແໜງການປູກຝັງ ເພື່ອຢັ້ງຢືນຄວາມຖືກຕ້ອງ ທາງດ້ານເຕັກນິກວິຊາການປູກຝັງ ແລະ ເປັນບ່ອນອີງໃຫ້ແກ່ພະນັກງານວິຊາການ ໃນການຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງປະຕິບັດ ຂອງຜູ້ປະກອບການ ຫຼື ຫົວໜ່ວຍທຸລະກິດ ໃຫ້ປະຕິບັດຕາມ ບົດວິພາກເສດຖະກິດ-ເຕັກນິກ ກຳນົດໄວ້ພ້ອມທັງເປັນບ່ອນອີງ ໃນການສະເໜີຂໍໃບອະນຸຍາດ ດຳເນີນກິດຈະການກະສິກຳ ແລະ ປ່າໄມ້ ແລະ ໃບຢັ້ງຢືນບົດວິພາກເສດຖະກິດ-ເຕັກນິກ ການປູກພືດເປັນສິນຄ້າ ຈາກຂະແໜງການ ກະສິກຳ ແລະ ປ່າໄມ້.

# ພາກທີ IV
# ຄ່າທຳນຽມ ແລະ ຄ່າບໍລິການ

## ມາດຕາ 9 ຄ່າທຳນຽມ

- ຄ່າໃບຢັ້ງຢືນເຕັກນິກວິຊາການດ້ານການປູກຝັງ 150,000 ກີບ;
- ຄ່າກວດແກ້ ແລະ ຮຽບຮຽງເອກະສານ ໃຫ້ປະຕິບັດຕາມ ລັດຖະບັນຍັດ ຂອງປະທານປະເທດ ກ່ຽວກັບ ຄ່າທຳນຽມ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ມາດຕາ 10 ຄ່າບໍລິການດ້ານວິຊາການ

ຄ່າບໍລິການດ້ານວິຊາການ ໃນການລົງຕິດຕາມ, ກວດກາພື້ນທີ່ຕົວຈິງ, ຄ່າໃຊ້ຈ່າຍ ໃນການຈັດກອງປະຊຸມວິຊາການ ແມ່ນຜູ້ປະກອບການ ຫຼື ຫົວໜ່ວຍທຸລະກິດ ເປັນຜູ້ຮັບຜິດຊອບທັງໝົດ ເຊິ່ງຄິດໄລ່ງົບ ປະມານການໃຊ້ຈ່າຍຕາມຂໍ້ຕົກລົງ ຂອງກະຊວງ ການເງິນ ວ່າດ້ວຍ ກຳນົດໝາຍການໃຊ້ຈ່າຍງົບປະມານຂອງລັດ ສະບັບເລກທີ່ 2066/ກງລົງວັນທີ **25/06/2015** ຫຼື ຄິດໄລ່ຄ່າບໍລິການ ດ້ານວິຊາການຕາມແຕ່ລະໄລຍະ ການປ່ຽນແປງຂອງກະຊວງ ການເງິນ ກຳນົດໄວ້.

# ພາກທີ V
# ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

## ມາດຕາ 11 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດການດຳເນີນກິດຈະການກະສິກຳ ແລະ ປ່າໄມ້ ເວົ້າລວມ, ເວົ້າສະເພາະແມ່ນການດຳເນີນກິດຈະການດ້ານການປູກຝັງ ໄດ້ທັງປະລິມານ ແລະ ຄຸນນະ

ພາບ, ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ, ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມລະບຽບກົດໝາຍ.

**ມາດຕາ 12 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ດຳເນີນກິດຈະການດ້ານການປູກພືດເປັນສິນຄ້າ ບໍ່ປະຕິບັດຕາມບົດແນະນຳສະບັບນີ້ ຈະຖືກຕັກເຕືອນ, ສຶກສາອົບຮົມ ແລະ ຖ້າຮ້າຍແຮງ ຈະຖືກປັບໃໝເທົ່າຕົວ ຕາມມູນຄ່າຂອງການກໍ່ຄວາມເສຍຫາຍຕົວຈິງ ເຊັ່ນ: ການຈັດຕັ້ງປະຕິບັດ ບໍ່ຖືກຕ້ອງຕາມເຕັກນິກວິຊາການ, ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ, ລາຍງານຂະບວນການຜະລິດບໍ່ຖືກຕ້ອງຕາມຄວາມຈິງ ແລະ ບໍ່ໃຫ້ຄວາມຮ່ວມມືກັບພະນັກງານວິຊາການທີ່ເຮັດໜ້າທີ່ໃນການຄຸ້ມຄອງ, ຕິດຕາມກວດກາ ການຈັດຕັ້ງປະຕິບັດ ການດຳເນີນກິດຈະການຂອງບໍລິສັດ ແລະ ອື່ນໆ.

## ພາກທີ VI

## ບົດບັນຍັດສຸດທ້າຍ

**ມາດຕາ 13 ການຈັດຕັ້ງປະຕິບັດ**

1. **ກົມປູກຝັງ:**

- ຄົ້ນຄວ້າມີຄຳເຫັນທາງດ້ານເຕັກນິກວິຊາການ;
- ເປັນເຈົ້າການ ປະສານກັບຂະແໜງການອື່ນໆ ທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອລົງກວດກາພື້ນທີ່ຕົວຈິງ;
- ເປັນເຈົ້າການ ເປີດກອງປະຊຸມ ຢັ້ງຢືນທາງດ້ານເຕັກນິກວິຊາການ ໂດຍມີພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເຂົ້າຮ່ວມ;
- ອອກໃບຢັ້ງຢືນເຕັກນິກວິຊາການ ດ້ານການປູກພືດເປັນສິນຄ້າ ໃຫ້ແກ່ຜູ້ປະກອບການ;

- ລົງຊຸກຍູ້, ຕິດຕາມ ກວດກາ ແລະ ເກັບກຳຂໍ້ມູນ ການຈັດຕັ້ງປະຕິບັດໂຄງການ ຂອງຜູ້ປະກອບການໃນຂອບເຂດທົ່ວປະເທດ ແຕ່ລະໄລຍະ ເພື່ອລາຍງານຂັ້ນເທິງຊາບ.

**2. ຂະແໜງປູກຝັງ ແຂວງ, ນະຄອນຫຼວງ**

- ຄົ້ນຄວ້າມີຄຳເຫັນທາງດ້ານເຕັກນິກວິຊາການ;
- ເປັນເຈົ້າການ ປະສານກັບຂະແໜງການອື່ນໆ ທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ເພື່ອລົງກວດກາພື້ນທີ່ຕົວຈິງ;
- ເປັນເຈົ້າການ ເປີດກອງປະຊຸມ ຢັ້ງຢືນທາງດ້ານເຕັກນິກວິຊາການ ໂດຍມີກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ເຂົ້າຮ່ວມ;
- ອອກໃບຢັ້ງຢືນເຕັກນິກວິຊາການ ດ້ານການປູກພືດເປັນສິນຄ້າ ໃຫ້ແກ່ຜູ້ປະກອບການ;
- ລົງຊຸກຍູ້, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດໂຄງການ ຂອງຜູ້ປະກອບການ ຢູ່ພາຍໃນແຂວງຂອງຕົນແຕ່ລະໄລຍະ ເພື່ອລາຍງານຂັ້ນເທິງຊາບ.

**3. ໜ່ວຍງານປູກຝັງ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ**

ເປັນຜູ້ຊຸກຍູ້, ຕິດຕາມ, ເກັບກຳຂໍ້ມູນ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດໂຄງການປູກພືດເປັນສິນຄ້າ ຂອງຜູ້ປະກອບການຢູ່ພາຍໃນເມືອງຂອງຕົນຢ່າງໃກ້ສິດ ແລະ ລາຍງານສະພາບການເຄື່ອນໄຫວ, ຜົນການຈັດຕັ້ງປະຕິບັດໂຄງການ ຂອງຜູ້ປະກອບການ ໃຫ້ຂະແໜງປູກຝັງຊາບເປັນໄລຍະ ເພື່ອຮັບປະກັນປະສິດທິຜົນຂອງການລົງທຶນ ແລະ ຫຼີກລ້ຽງບັນຫາຕ່າງໆ ທີ່ຈະສົ່ງຜົນກະທົບຕໍ່ປະຊາຊົນຜູ້ຜະລິດ, ຜູ້ລົງທຶນ ແລະ ສິ່ງແວດລ້ອມ.

**4. ຜູ້ປະກອບການ ຫຼື ຫົວໜ່ວຍທຸລະກິດ**

ຕ້ອງປະກອບເອກະສານໃຫ້ຄົບຖ້ວນ ແລະ ປະຕິບັດຕາມ ບົດແນະນຳສະບັບນີ້ ເພື່ອສະເໜີຂໍໃບຢັ້ງຢືນເຕັກນິກວິຊາການ ດ້ານການປູກພືດເປັນ

ສິນຄ້າ, ໃບອະນຸຍາດດຳເນີນກິດຈະການ ກະສິກຳ ແລະ ປ່າໄມ້ ພ້ອມດຽວກັນນັ້ນ, ໃນການຈັດຕັ້ງປະຕິບັດຕົວຈິງ ຕ້ອງປະຕິບັດຕາມລະບຽບຫຼັກການຕາມເຕັກນິກວິຊາການ ຢ່າງເຂັ້ມງວດ ເພື່ອບໍ່ໃຫ້ສິ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

**ມາດຕາ 14 ຜົນສັກສິດ**

ບົດແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມປູກຝັງ

ວິໄລສຸກ ເຄນນະວົງ